# ໂຄງການສະໜັບສະໜູນຜູ້ໃຫ້ການດູແລ

***ປະກາດໂດຍ Milwaukee County Caregiver Support Program– ສະໜອງການສະໜັບສະໜູນແກ່ທ່ານຄະນະທີ່ທ່ານໃຫ້ການຊ່ວຍເຫຼືອແກ່ຜູ້ອື່ນ.***

## ການບໍລິການສ່ວນບຸກຄົນ

- ບໍລິການໃນການອະນຸມັດເງິນທຶນເພື່ອໃຫ້ການສະໜັບສະໜູນ ແລະ ຊ່ວຍໃນຊ່ວງຂັດສົນ
- ບັນດາຊັບພະຍາກອນ ແລະ ຂໍ້ມູນຂ່າວສານ
- ຊັບພະຍາກອນເພື່ອຊ່ວຍເຫຼືອໂຕເອງ ສໍາລັບຜູ້ໃຫ້ການດູແລ

## ບໍລິການແກ່ຊຸມຊົນ

- ໃຫ້ການສຶກສາ ແລະ ຝຶກອົບຮົມ
- ໂຄສະນາຊຸມຊົນ
- ການປຸກລະດົມ



## ພວກເຮົາຢູ່ນະທີ່ນີ້ເມື່ອທ່ານມີຄວາມສົນໃຈ.

ທ່ານເປັນຍາດພີ່ນ້ອງ, ເປັນຄູ່ສົມລົດ, ເປັນຄູ່ຮ່ວມງານ, ຫຼື ເປັນເພື່ອນທີ່ຊ່ວຍຄົນຮັກໃນວຽກງານປະຈໍາວັນເພື່ອຊ່ວຍໃຫ້ພວກເຂົາເຈົ້າມີຄວາມປອດໄພ, ສະດວກສະບາຍ, ແລະ ມີຄວາມສຸກຫຼືບໍ? ເມື່ອທີ່ທ່ານໄດ້ເປັນຜູ້ໃຫ້ການເບິ່ງແຍງ ແລະ ພວກເຮົາຈະຢູ່ນະທີ່ນີ້ເພື່ອໃຫ້ການສະໜັບສະໜູນແກ່ທ່ານ! ໂຄງການສະໜັບສະໜູນຜູ້ໃຫ້ການດູແລປະຈໍາເມືອງ Milwaukee ທີ່ສະໜອງບໍລິການ, ໃຫ້ການສຶກສາ, ແລະ ໃຫ້ການປຸກລະດົມ ເພື່ອສົ່ງເສີມດ້ານສຸຂະພາບ ແລະ ການມີສະຫວັດດີພາບ ຂອງ ຜູ້ໃຫ້ການດູແລ ເຊິ່ງເຂົາເຈົ້າຈະໃຫ້ການຊ່ວຍເຫຼືອທີ່ສໍາຄັນຕໍ່ກັບຜູ້ອື່ນ.

**ສໍາລັບຂໍ້ມູນເພີ່ມເຕີມກະລຸນາໂທເບີ (414) 289-6874 ຫຼື ອີເມວ caregiversupport@milwaukeecountywi.gov.**

MILWAUKEE COUNTY
DEPARTMENT OF HEALTH
& HUMAN SERVICES
AGING & DISABILITIES SERVICES

1220 West Vliet Street, Suite 300 | Milwaukee, WI 53205 | (414) 289–6874 | county.milwaukee.gov/dhhs

# ການຊ່ວຍດ້ານການເງິນ ແກ່ ຜູ້ໃຫ້ການດູແລທີ່ໄດ້ຮັບສິດ

## ໂຄງການແຫ່ງຊາດໃນການໃຫ້ການຊ່ວຍເຫຼືອຜູ້ເບິ່ງແຍງຄອບຄົວ (National Family Caregiver Support Program)

ກົດໝາຍວ່າດ້ວຍຄົນອາເມລິກາສະບັບດັ້ງເດີມ (Older Americans Act ) ໂຄງການທີ່ໃຫ້ການສະໜອງການສະໜັບສະໜູນ ແລະ ຊັບພະຍາກອນທາງດ້ານການເງິນແກ່ຜູ້ໃຫ້ການດູແລນອກລະບົບ ແລະ ຄອບຄົວຂອງຜູ້ໃຫ້ການດູແລ ເນື່ອງຈາກວ່າເຂົາເຈົ້າສະໜອງການດູແລທີ່ສຳຄັນໃຫ້ແກ່ຄົນທີ່ເປັນທີ່ຮັກຂອງຕົນ. ການອະນຸມັດເງິນທຶນເພື່ອໃຫ້ການສະໜັບສະໜູນເຊັ່ນວ່າການຝຶກອົບຮົມ, ການດັດແປງເຮືອນຊານ, ຊັບພະຍາກອນໃນການດູແລຕົນເອງ, ແລະ ໃຫ້ການຊ່ວຍເຫຼືອໃນຊ່ວງເວລາຂັດສົນ

### ມີໃຜແດ່ທີ່ສາມາດເຂົ້າຮ່ວມໄດ້?

- ຜູ້ໃຫ້ການດູແລທີ່ບໍ່ເປັນທາງການທີ່ໃຫ້ການເບິ່ງແຍງບຸກຄົນທີ່ມີເກນອາຍຸແຕ່ 60 ປີຂຶ້ນໄປ ຫຼື ຜູ້ທີ່ເປັນພະຍາດສະ
ໝອງເສື່ອມໃນທຸກໄວອາຍຸທີ່ບໍ່ໄດ້ລົງທະບຽນຢູ່ໃນນະໂຍບາຍ Medicaid ໂຄງການໃນການດູແລໃນໄລຍະຍາວ ຫຼື ອາໃສຢູ່ໃນສະຖານທີ່ທີ່ໃຫ້ດູແລ.
- ພໍ່ຕູ້ແມ່ຕູ້ ແລະ ຍາດພີ່ນ້ອງທີ່ມີອາຍຸແຕ່ 55 ປີ ຫຼື ສູງກວ່າທີ່ເປັນຜູ້ໃຫ້ການດູແລຂັ້ນຕົ້ນສຳລັບເດັກນ້ອຍ ຫຼື ຜູ້ໃຫຍ່ທີ່ເປັນຄົນພິການ.

## ໂຄງການໃຫ້ການຊ່ວຍເຫຼືອຄອບຄົວ ແລະ ຜູ້ເບິ່ງແຍງເດັກ Alzheimer (Alzheimer’s Family and Caregiver Support Program)

ໂຄງການຂອງລັດ Wisconsin ທີ່ໄດ້ອຸທິດຕົນເພື່ອເສີມສ້າງຊີວິດຂອງຜູ້ໃຫ້ການດູແລທີ່ບໍ່ເປັນທາງການ ແລະ ຄອບຄົວຜູ້ໃຫ້ການດູແລ ໃນຂະນະທີ່ໃຫ້ການຊ່ວຍເຫຼືອຜູ້ທີ່ເປັນໂລກສະໝອງເສື່ອມໃຫ້ຍັງຄົງຢູ່ໃນຊຸມຊົນໃຫ້ໄດ້ຢູ່ຕາບນານເທົ່າທີ່ນານໄດ້. ການອະນຸມັດເງິນທຶນຊ່ວຍເຫຼືອຈະສາມາດນຳໃຊ້ເພື່ອສະໜອງການດູແລໃນຊ່ວງຂັດສົນຂອງຜູ້ໃຫ້ເບິ່ງແຍງ ແລະ ຊື້ສິນຄ້າ ແລະ ການບໍລິການທີ່ຈຳເປັນໃຫ້ແກ່ຜູ້ທີ່ເປັນໂລກສະຫມອງເສື່ອມທີ່ບໍ່ສາມາດກັບຄືນສູ່ສະພາບປົກກະຕິໄດ້.

### ມີໃຜແດ່ທີ່ສາມາດເຂົ້າຮ່ວມໄດ້?

- ຜູ້ໃຫ້ການດູແລທີ່ບໍ່ເປັນທາງການທີ່ເບິ່ງແຍງຄົນໃນທຸກໄວອາຍຸທີ່ຖືກວິນິດໄສພະຍາດ ຂອງ Alzheimer ຫຼື ໂລກສະຫມອງເສື່ອມອື່ນໆເມື່ອມີການປະຍຸກໃຊ້ກັບບຸກຄົນທີ່ມີການວິນິດໄສດັ່ງຕໍ່ໄປນີ້:
    - ອາໄສຢູ່ໃນຊຸມຊົນ ຫຼື ເຮືອນສະເພາະ
    - ບໍ່ໄດ້ລົງທະບຽນຢູ່ໃນໂຄງການການດູແລໄລຍະຍາວ
    - ມີລາຍໄດ້ລວມປະຈຳປີໃນຈຳນວນ $48,000 ຫຼື ຫນ້ອຍກວ່າ (ລວມທັງລາຍຮັບຂອງຜົວ ຫຼື ເມຍ). ຄ່າໃຊ້ຈ່າຍມີການຕິດພັນກັບການດູແລຂອງຜູ້ທີ່ເປັນໂລກສະໝອງເຊື່ອມຈະສາມາດຖືກຫັກອອກເມື່ອຄິດໄລ່ລາຍໄດ້.

## ໂທຫາ ADRC (ສູນຊັບພະຍາກອນຊ່ວຍເຫຼືອແກ່ຜູ້ສູງອາຍຸ & ຄົນພິການ) ສຶກສາຂໍ້ມູນເພີ່ມເຕີມ: (414) 289-6874

ສູນໃຫ້ການຊ່ວຍເຫຼືອຜູ້ສູງອາຍຸ ແລະ ຄົນພິການ ປະຈຳເມືອງ Milwaukee **(Milwaukee County Aging & Disabilities )** ຈະສະໜອງຈຸດດຽວໃນການເຂົ້າເຖິງການບໍລິການສຳລັບຜູ້ສູງອາຍຸ ແລະ ຄົນພິການ. ພວກເຮົາສະເໜີໂຄງການຕ່າງໆຢ່າງກ້ວາງຂວາງ ແລະ ມີບໍລິການເພື່ອຕອບສະໜອງຄວາມຕ້ອງການທີ່ມີຄວາມຫຼາກຫຼາຍຂອງຊຸມຊົນຂອງພວກເຮົາ.